# ພັກປະຊາຊົນປະຕິວັດລາວ
# ຜູ້ຈັດຕັ້ງນຳພາທຸກໄຊຊະນະ
# ຂອງການປະຕິວັດລາວ

ຮຽບຮຽງໂດຍຄະນະໂຄສະນາອົບຮົມສູນກາງພັກ

ສຳນັກພິມຈຳໜ່າຍ ສ. ປ. ປ. ລ.

1980

# ພັກປະຊາຊົນປະຕິວັດລາວ

# ຜູ້ຈັດຕັ້ງແລະນຳພາທຸກໄຊຊະນະ

# ຂອງ

# ການປະຕິວັດລາວ

# ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະ ຂອງການປະຕິວັດລາວ

**ຮຽບຮຽງໂດຍຄະນະໂຄສະນາອົບຮົມສູນກາງພັກ**

## I. ພັກປະຊາຊົນປະຕິວັດລາວ ເປັນພັກທີ່ສືບທອດ ພາລະກິດຂອງພັກກອມມູນິດອິນດູຈີນ.

ພາຍຫລັງທີ່ມະຫາປະຕິວັດສັງຄົມນິຍົມເດືອນ ໑໐ ປີ ໑໙໑໗ ຂອງສະຫະພາບໂຊວຽດໄດ້ສຳເລັດຜົນ ຊົນຊັ້ນກຳມະກອນ ໄດ້ກາຍມາເປັນໃຈກາງຂອງບຸກສະໄໝ ໃນຫລາຍປະເທດໃນ ໂລກຊົນຊັ້ນກຳມະກອນ ໄດ້ຈັດຕັ້ງພັກກອມມູນິດຂຶ້ນ ແລະ ໃນນັ້ນໃນວັນທີ ໓/໒/໑໙໓໐ ຊົນຊັ້ນກຳມະກອນອິນດູຈີນ ກໍໄດ້ມີການສ້າງຕັ້ງພັກກອມມູນິດຂຶ້ນ ໂດຍແມ່ນປະທານໂຮ່ຈີມິນເປັນຫົວໜ້າ ນັບຕັ້ງແຕ່ໄດ້ຮັບການຈັດຕັ້ງຂຶ້ນແລ້ວ ພັກກອມມູນິດອິນດູຈີນໄດ້ມີໂຄງການການເມືອງດຳເນີນການປະຕິວັດຊາດ–ປະຊາທິປະໄຕ ກ້າວ

ຂຶ້ນສັງຄົມນິຍົມ ແລະ ນຳພາຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານອິນດູຈີນດຳເນີນການຕໍ່ສູ້ ເພື່ອເຮັດໃຫ້ໂຄງການ ການເມືອງນັ້ນປະກົດເປັນຈິງ ປະເທດລາວ ກໍໄດ້ມີການເຄື່ອນໄຫວຂອງພັກກອມມູນິດອິນດູຈີນ. ອົງຄະນະພັກແຄ້ວນລາວ ໄດ້ຮັບ ການ ສ້າງ ຕັ້ງ ຂຶ້ນ ໃນ ປີ ໑໙໓໖ ແລະ ໄດ້ມີການຈັດຕັ້ງການເຄື່ອນໄຫວຕໍ່ສູ້ ຂອງກຳມະກອນປະຊາຊົນຜູ້ອອກແຮງງານ ແລະ ຊາວໜຸ່ມນັກຮຽນຫລາຍຂະບວນການເລີ່ມແຕ່ປີ ໑໙໔໐ ພັກໄດ້ເພີ່ມທະວີການເຄື່ອນໄຫວເພື່ອຂົນຂວາຍປະຕິວັດ ແລະ ໄດ້ກ້າວໄປເຖິງການລຸກຮື້ຂຶ້ນຍຶດອຳນາດການປົກຄອງຂອງປະຊາ ຊົນ ລາວ ໃນ ວັນ ທີ ໒໓/໘/໑໙໗໕ ໂດຍການນຳພາຂອງຄະນະພັກແຄ້ວນລາວ ແລະ ປະກາດປະເທດລາວເປັນເອກະລາດ ໃນວັນທີ ໑໒/໑໐ ປີ ໑໙໔໕.

ພາຍຫລັງທີ່ພວກລ່າເມືອງຂຶ້ນຝະລັ່ງ ໄດ້ກັບຄືນມາຮຸກຮານປະເທດລາວເປັນເທື່ອທີ ໒ ພັກກອມມູນິດອິນດູຈີນໄດ້ຈັດຕັ້ງກຳລັງປະຕິວັດ ແລະ ຮັກຊາດຢູ່ໃນລາວຄືນໃໝ່ ແລະ ນຳພາການຕໍ່ຕ້ານດ້ວຍການສ້າງບັນດາກຳລັງປະກອບອາວຸດຂອງປະຊາຊົນບັນດາກຳລັງການເມືອງຖານທີ່ໝັ້ນຕໍ່ຕ້ານຂຶ້ນໃນແຫ່ງຕ່າງໆ ໃນທົ່ວປະເທດການປະ

ຕິວັດໄດ້ຂະຫຍາຍຕົວຢ່າງໄວວາໃນວັນທີ ໒໐/໒/໑໙໔໙ ພັກໄດ້ຈັດຕັ້ງກອງທັບປົດປ່ອຍປະຊາຊົນລາວຂຶ້ນ ໃນວັນທີ ໑໓/໘/໑໙໕໐ ພັກໄດ້ຮຽກໂຮມກອງປະຊຸມໃຫຍ່ ແນວລາວຕໍ່ຕ້ານທົ່ວປະເທດ ກອງປະຊຸມໃຫຍ່ໄດ້ວາງແນວທາງຕໍ່ຕ້ານ ຈັດຕັ້ງແນວລາວອິດສະລະ ແລະ ລັດຖະບານລາວຕໍ່ຕ້ານ ຈາກນັ້ນການຕໍ່ຕ້ານກໍໄດ້ຮັບໄຊຊະນະຍິ່ງໆຂຶ້ນ ພັກໄດ້ສັງເກດເຫັນວ່າ ຫນ້າທີປະຫວັດສາດຂອງຕົນ ໃນການປູກລະດົມບັນດາຊົນຊາດຢູ່ອິນດູຈີນ ລຸກຂຶ້ນເຮັດການປະຕິວັດຍາດເອົາອຳນາດການປົກຄອງ ແລະ ດຳເນີນການຕໍ່ຕ້ານຝະລັ່ງນັ້ນໄດ້ສຳເລັດຜົນຢ່າງມີໄຊ ຂະບວນການປະຕິວັດໃນແຕ່ລະປະເທດ ໃນອິນດູຈີນໄດ້ເຕີບໃຫຍ່ ແຕ່ລະປະເທດກໍໄດ້ກາຍເປັນລັດຂອງໃຜລາວ, ສະນັ້ນ ຈຶ່ງຄວນໃຫ້ຊົນຊັ້ນກຳມະກອນໃນແຕ່ລະປະເທດສ້າງພັກຂອງຕົນຕ່າງຫາກ ເພື່ອນຳພາຂະບວນການປະຕິວັດຂອງຕົນໃຫ້ແທດເຖິງ ດັ່ງນັ້ນກອງປະຊຸມໃຫຍ່ເທື່ອທີສອງຂອງພັກ ທີເປີດຂຶ້ນວັນທີ ໑໐ ເຖິງວັນທີ ໑໙/໒/໑໙໕໑ ຈຶ່ງໄດ້ຕົກລົງແຍກກັນອອກເປັນພັກຂອງແຕ່ລະປະເທດໃຜມັນ.

ພາຍຫລັງທີໄດ້ມີການກຽມຢູ່ໃນໄລຍະຫນຶ່ງ ຮອດວັນທີ ໒໒/໓/໑໙໕໕ ພັກປະຊາຊົນປະຕິວັດລາວກໍໄດ້ຮັບ

ການສ້າງຕັ້ງຂຶ້ນເປັນບາງການ ໂດຍກອງປະຊຸມໃຫຍ່ຂອງ
ບັນດາຜູ້ແທນສະມາຊິກເກົ່າ ຂອງພັກກອມມູນິດອິນດູຈີນ
ເຊິ່ງໃນຂະນະນັ້ນມີ ມີ໐໐ ກ່ວາສະຫາຍ ທັງນີ້ກໍເພື່ອ
ສືບຕໍ່ພາລະກິດປະຕິວັດ ຂອງພັກກອມມູນິດອິນດູຈີນດັ່ງ
ໄດ້ກ່າວມາແລ້ວ (ໃນນີ້ສ້າງຕັ້ງ ນັ້ນ ເອີ້ນວ່າພັກປະຊາຊົນ
ລາວແຕ່ຕໍ່ມາໃນກອງປະຊຸມໃຫຍ່ເທື່ອທີ ໒ ຂອງພັກໄດ້
ຕື່ມຄຳວ່າປະຕິວັດເພື່ອເໝາະກັບລັກສະນະຊົນຊັ້ນ ແລະ
ລັກສະນະນຳໜ້າຕໍ່ສູ້)

ພັກປະຊາຊົນປະຕິວັດລາວເປັນພັກມາກ – ເລນິນອັນ
ແທ້ຈິງຂອງຊົນຊັ້ນກຳມະກອນລາວ, ເປັນກອງນຳໜ້າທີ່
ມີການຈັດຕັ້ງ ແລະ ເປັນການຈັດຕັ້ງສູງສຸດຂອງຊົນຊັ້ນ
ກຳມະກອນ ໂດຍສືບຕໍ່ພາລະກິດ ຂອງພັກກອມມູນິດອິນ
ດູຈີນ ພັກປະຊາຊົນປະຕິວັດລາວດຳເນີນການຕໍ່ສູ້ເພື່ອຜົນ
ປະໂຫຍດຂອງຊົນຊັ້ນກຳມະກອນ ຂອງປະຊາຊົນຜູ້ອອກ
ແຮງງານຂອງຊາດລາວທັງໝົດ.ພັກປະກອບດ້ວຍບຸກຄົນ
ທີ່ຕື່ນຕົວ ຫ້າວຫັນປະຕິວັດ ດີເດັ່ນກ່ວາເພິ່ນ ແລະ ໄດ້ຮັບ
ຄວາມເຊື່ອຖື ແລະ ຄວາມໄວ້ວາງໃຈຈາກມະຫາຊົນກ່ວາ
ເພິ່ນໃນຊົນຊັ້ນກຳມະກອນ ໃນໝູ່ຊາວໄຮ່ ນາ ຜູ້ ອອກ ແຮງ
ງານ ແລະ ໃນໝູ່ນັກຮຽນ ຮູ້ປະຕິວັດທີ່ດີເດັ່ນກ່ວາເພິ່ນ.

ນອກຈາກນັ້ນພັກຍັງໄດ້ຮັບເອົາບາງຄົນ ທີ່ມາຈາກຊັ້ນຄົນອື່ນໆ ທີ່ມີໃຈຮັກຊາດ ແລະ ຕື່ນຕົວກ່ຽວກັບຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານ, ຕັ້ງໜ້າຕໍ່ສູ້ເສຍສະຫລະ ເພື່ອຜົນປະໂຫຍດຂອງຊົນຊັ້ນກຳມະກອນ ເພື່ອອຸດົມຄະຕິກອມມູນິດ.

ຢູ່ໃນກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກ, ພັກໄດ້ວາງວຸດຖຸປະສົງຂອງພັກອອກຢ່າງຈະແຈ້ງຄື: "ສາມັກຄີ ແລະ ນຳພາປະຊາຊົນບັນດາຊົນຊາດ ເຮັດການປະຕິວັດຊາດ ປະຊາທິປະໄຕປະຊາຊົນ ໃຫ້ສຳເລັດໃນທົ່ວປະເທດກ້າວຂຶ້ນເຮັດໃຫ້ການປະຕິວັດສັງຄົມນິຍົມ, ສ້າງລັດທິສັງຄົມນິຍົມ ແລະ ລັດທິກອມມູນິດຢູ່ໃນປະເທດລາວ"

ພັກໄດ້ກຳນົດໜ້າທີ່ພື້ນຖານ ຂອງການປະຕິວັດລາວໄວ້ຢ່າງຈະແຈ້ງເຊັ່ນດຽວກັນຄື: ສາມັກຄີປະຊາຊົນທຸກຊົນຊາດ, ໂຄ່ນລົ້ມຈັກກະພັດຮຸກຮານ, ກຸ່ມນາຍທຶນຈຳໜ່າຍອາດຍາສິດ, ຂຸນເສິກ ແລະ ຊົນຊັ້ນສັກດີນາ ສຳເລັດການປະຕິວັດຊາດ ປະຊາທິປະໄຕປະຊາຊົນໃນທົ່ວປະເທດ ແລະ ກຽມເງື່ອນໄຂທຸກຢ່າງທີ່ຈຳເປັນ ເພື່ອ ກ້າວ ຂຶ້ນ ສັງ ຄົມນິຍົມໂດຍກົງ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວແບບທຶນນິຍົມ, ເຮັດໃຫ້ປະເທດລາວເປັນປະເທດສັນຕິພາບ, ເອກະ

ລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

ຢູ່ໃນກອງປະຊຸມໃຫຍ່ຄັ້ງທີສອງຂອງພັກ ບັງໄດ້ກຳນົດໄວ້ວ່າ: ການປະຕິວັດລາວ ເປັນພາກສ່ວນໜຶ່ງທີ່ຕິດພັນຢ່າງສະໜິດແໜ້ນ ຂອງການປະຕິວັດອິນດູຈີນ, ພ້ອມກັນນັ້ນ ກໍປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນຂະບວນການເຄື່ອນໄຫວສາກົນຕໍ່ສູ້ເພື່ອສັນຕິພາບ ເອກະລາດແຫ່ງຊາດປະຊາທິປະໄຕ ແລະ ສັງຄົມນິຍົມ.

ພັກປະຊາຊົນປະຕິວັດລາວຖືເອົາລັດທິມາກ – ເລນິນ, ລັດທິຮັກຊາດອັນແທ້ຈິງ ສົມທົບກັບລັດທິສາກົນກຳມະຊີບເປັນພື້ນຖານແນວຄິດ ແລະ ເປັນເຂັມທິດໃຫ້ແກ່ການເຄື່ອນໄຫວທຸກປະການຂອງຕົນ.

ພັກຖືວ່າຄວາມສາມັກຄີເປັນອັນໜຶ່ງອັນດຽວກັນພາຍໃນພັກເປັນຫລັກການພື້ນຖານ ທີ່ແນໃສ່ຮັບປະກັນຄວາມເປັນເອກະພາບທາງດ້ານແນວຄິດ, ການເມືອງ, ການຈັດຕັ້ງແລະການກະທຳ. ພັກໄດ້ກຳນົດວ່າການປະຕິວັດລາວແມ່ນພາລະກິດຂອງມະຫາຊົນ, ສະນັ້ນພັກຈຶ່ງມີການຕິດພັນສະໜິດແໜ້ນກັບມະຫາຊົນ ໃນທຸກການເຄື່ອນໄຫວຂອງຕົນ.

ພັກປະຊາຊົນປະຕິວັດລາວເອົາການຕຳນິຕົນເອງແລະຕຳນິກັນເປັນກົດເກນຂະຫຍາຍຕົວ. ຢູ່ໃນກົດລະບຽບ (ປ່ຽນແປງ) ທີ່ກອງປະຊຸມໃຫຍ່ຄັ້ງທີສອງ ຂອງພັກໄດ້ຜ່ານ, ພັກໄດ້ກຳນົດເງື່ອນໄຂ ຂອງຜູ້ທີ່ເຂົ້າເປັນສະມາຊິກພັກໄວ້ດັ່ງຕໍ່ໄປນີ້: ຄົນລາວທຸກຄົນນັບທັງຊາດອື່ນ ທີ່ໄດ້ເຂົ້າສັນຊາດລາວ) ທີ່ອອກແຮງງານ, ບໍ່ຂູດຮີດ, ອາຍຸແຕ່ ໑໘ ປີຂຶ້ນໄປແລະເຫັນດີເຫັນພ້ອມ, ສະໝັກໃຈຕັ້ງໜ້າປະຕິບັດໂຄງການ ການເມືອງແລະກົດລະບຽບຂອງພັກ, ເຄື່ອນໄຫວຢູ່ໃນການຈັດຕັ້ງຮາກຖານຂອງພັກ, ຍອມປະຕິບັດຕາມລະບຽບວິໄນຂອງພັກ, ເສັຽເງິນບຳລຸງພັກ ກໍອາດຈະຮັບເຂົ້າເປັນສະມາຊິກຂອງພັກໄດ້. ນອກຈາກນັ້ນ, ຢູ່ໃນກົດລະບຽບຂອງພັກດັ່ງກ່າວ, ຍັງໄດ້ກຳນົດໜ້າທີ່ຂອງສະມາຊິກໄວ້ດັ່ງນີ້:

໑/– ຕັ້ງໜ້າຕໍ່ສູ້ປະຕິບັດມະຕິຄຳສັ່ງຂອງພັກ, ເດັດດ່ຽວຜ່ານຜ່າຄວາມຫຍຸ້ງຍາກສຳເລັດທຸກໜ້າທີ່ ທີ່ພັກໄດ້ມອບໝາຍໃຫ້ເຂົ້າຮ່ວມການດຳເນີນຊີວິດ ຂອງໜ່ວຍພັກຢ່າງສະໝ່ຳສະເໝີ, ໂຄສະນາຂະຫຍາຍອິດທິພົນຂອງພັກ.

໒/– ປົກປັກຮັກສາ ແລະ ປັບປຸງຄວາມສາມັກຄີເປັນ

ເອກະພາບພາຍໃນພັກ, ສາມັກຄີທຸກຊົນຊາດແລະສາມັກຄີສາກົນ.

໓/– ຕິດພັນຢ່າງສະໜິດແໜ້ນກັບມະຫາຊົນຢູ່ທຸກເວລາ, ອົບຮົມຈັດຕັ້ງນຳພາແລະເປັນແບບຢ່າງໃຫ້ມະຫາຊົນໃນການປະຕິບັດທຸກວຽກງານແລະນະໂຍບາຍຂອງພັກເປັນຫ່ວງເປັນໃຍເຖິງຊີວິດການເປັນຢູ່ຂອງມະຫາຊົນ, ຮ່ຳຮຽນນຳມະຫາຊົນ.

໔/– ຕຳນິຕົນເອງແລະຕຳນິກັນ ເຮັດໃຫ້ພັກເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ເດັດດ່ຽວຕໍ່ສູ້ຕ້ານທຸກແນວຄິດແລະ ການກະທຳ ທີ່ນຳຜົນເສຍຫາຍມາໃຫ້ຜົນປະໂຫຍດຂອງພັກຂອງປະຊາຊົນແລະຂອງຊາດ.

໕/– ປະຕິບັດຕາມການຈັດຕັ້ງ, ປະຕິບັດລະບຽບວິໄນຂອງພັກ, ຮັບໃຊ້ພັກ ຮັບໃຊ້ປະຊາຊົນຢ່າງສຸດອົກສຸດໃຈ, ຍົກສູງຜົນປະໂຫຍດຂອງພັກ, ຂອງປະຊາຊົນຂຶ້ນສູງກ່ວາຜົນປະໂຫຍດສ່ວນຕົວ, ຍົກສູງສະຕິລະວັງຕົວປະຕິວັດແລະສະຕິປ້ອງກັນພັກ, ຮັກສາຄວາມລັບຂອງພັກ, ຂອງອຳນາດການປົກຄອງແລະຂອງອົງການຈັດຕັ້ງມະຫາຊົນ.

໖/– ອອກແຮງຝຶກຝົນຫລໍ່ຫລອມຕົນເອງ, ອອກແຮງຮ່ຳຮຽນທິດສະດີ ມາກ–ເລນິນ ອອກແຮງຮ່ຳຮຽນແນວທາງ

ນະໂຍບາຍຂອງພັກຮ່ຳຮຽນວັດທະນະທຳ, ຮ່ຳຮຽນວິຊາສະເພາະ ເພື່ອຍົກລະດັບຄວາມຮູ້ໃນທຸກດ້ານໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

ກອງປະຊຸມໃຫຍ່ຄັ້ງທີສອງ ຂອງພັກໄດ້ກຳນົດນະໂຍບາຍໃຫຍ່ ໑໑ ຂໍ້ ໃຫ້ທຸກຂົງເຂດ: ການເມືອງ, ການທະຫານ, ເສດຖະກິດ, ວັດທະນະທຳ, ສັງຄົມແລະການຕ່າງປະເທດເພື່ອແນ່ໃສ່ນຳພາແລະປຸກລະດົມທົ່ວພັກທົ່ວກອງທັບ ແລະທົ່ວປວງຊົນສາມັກຄີກັນລຸກຂຶ້ນ, ຕັດສິນໃຈດຳເນີນການຕໍ່ສູ້ຕ້ານສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ ເດັດດ່ຽວຕ້ານພວກປະຕິການທົ່ວໄປ ທີ່ເປັນລູກມືຂອງຈັກກະພັດນິຍົມ, ປົດປ່ອຍປະເທດຊາດ, ສຳເລັດການປະຕິວັດຊາດປະຊາທິປະໄຕເຕົ້າໂຮມປະເທດ ເປັນອັນໜຶ່ງອັນດຽວແລະນຳເອົາການປະຕິວັດກ້າວຂຶ້ນ.

**II.** ພັກປະຊາຊົນປະຕິວັດລາວ ໄດ້ກຳເນີດເກີດ ຂຶ້ນແລະກຳສິດພູກຂາດທາງດ້ານການນຳພາ.

ການກຳເນີດເກີດຂຶ້ນ ຂອງພັກປະຊາຊົນປະຕິວັດລາວໄດ້ເປັນບາດລ້ຽວປະຫວັດສາດຂອງການປະຕິວັດລາວ. ນັບແຕ່ມື້ກຳເນີດເກີດຂຶ້ນ, ພັກກໍໄດ້ປະເຊີນໜ້າກັບສັດຕູຂອງຊາດຕົວໃຫຍ່ຫຼາຍຄືຈັກກະພັດອາເມລິກາ ທີ່ເປັນຈັກກະ

ພັດທົວໄປ່ໃນໂລກ. ໂດຍເສີມຂະຫຍາຍມູນເຊື້ອຕໍ່ສູ້ພິລະອາດຫານຂອງພັກກອມມູນິສ໌ອິນດູຈີນ, ເສີມຂະຫຍາຍຈິດໃຈຮັກຊາດຂອງປະຊາຊົນບັນດາຊົນຊາດ, ຈົ່ງຮັກພັກດີຕໍ່ລັດທິມາກ–ເລນິນ ແລະລັດທິສາກົນກຳມາຊີບ, ພັກໄດ້ອອກແຮງປັບປຸງແລະສ້າງຕົນເອງ, ປັບປຸງແລະສ້າງບັນດາກຳລັງປະກອບອາວຸດປະຊາຊົນ, ສ້າງຕັ້ງແນວລາວຮັກຊາດຂຶ້ນໃນວັນທີ ໖/໑/໑໙໕໖ ອັນເປັນແນວໂຮມແຫ່ງຊາດທີ່ຕັ້ງຢູ່ບົນພື້ນຖານພັນທະພາບກຳມະກອນ–ຊາວນາ ປັບປຸງແລະສ້າງຄັນແຖວພະນັກງານຂອງການປະຕິວັດ. ພັກ. ໄດ້ວາງແລະນຳພາປະຕິບັດແນວທາງການເມືອງ ດຳເນີນການຕໍ່ຕ້ານຈັກກະພັດອາເມລິກາ ແລະ ລູກມືເຮັດໃຫ້ປະເທດລາວເປັນປະເທດສັນຕິພາບ; ເອກະລາດ, ປະຊາທິປະໄຕ, ເອກະພາບ ວັດທະນາຖາວອນ.

ພັກ ໄດ້ສະແດງບົດບາດຂອງຕົນອອກຢ່າງຈະແຈ້ງໃນການນຳພາການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາຂອງປະຊາຊົນເຮົາ ແລະ ໄດ້ນຳເອົາໄຊຊະນະອັນບັນມື້ນັນໃຫຍ່ຫລວງມາໃຫ້ປະເທດຊາດ. ພັກໄດ້ເດັດດ່ຽວໃນການນຳພາຕີສັດຕູເພື່ອປົກປັກຮັກສາ ໒ ແຂວງເຕົ້າໂຮມ, ປຸກລະດົມຂະບວນການຕໍ່ສູ້ທາງດ້ານການເມືອງ ຂອງປະຊາຊົນໃນ

໑໐ ແຂວງ ດຳເນີນການເຈລະຈາກັບຝ່າຍກົງກັນຂ້າມ, ຄວັດເລີກຄວາມຂັດແຍ່ງພາຍໃນຖັ່ນແຖວສັດຕູ, ດ້ວຍເຫດນັ້ນ ພວກເຮົາໄດ້ກ້າວໄປເຖິງໄຊຊະນະ ໃນການເຊັນສັນຍາວຽງຈັນ ປີ ໑໙໕໗ ປະຕິບັດການລວມລາວຄັ້ງທີໜຶ່ງ ໃນການສ້າງຕັ້ງລັດຖະບານປະສົມຊຸດທຳອິດ ແລະ ໃນການເລືອກຕັ້ງເພີ່ມເຕີມສະພາລາສະດອນ ປີ ໑໙໕໘ ພວກເຮົາກໍຍາດໄດ້ທ່າດີ, ອິດທິພົນຂອງການປະຕິວັດນັບມື້ນັບສູງ, ແນວໂຮມແຫ່ງຊາດຕ້ານອາເມລິກາ ໄດ້ນັບມື້ ນັບກ້ວາງຂວາງ, ລູກມືຂອງອາເມລິການັບມື້ນັບຕົກຢູ່ໂດດດ່ຽວ. ຕໍ່ໜ້າສະພາບການດັ່ງກ່າວ, ຈັກກະພັດອາເມລິກາໄດ້ຈີກສັນຍາເຊີແນວປີ ໑໙໕໔ ກ່ຽວກັບອິນດູຈີນແລະສັນຍາວຽງຈັນແລ້ວມາໃຊ້ກຳລັງປະກອບອາວຸດເພື່ອປາບປາມ, ໂຄ່ນລົ້ມລັດຖະບານປະສົມ, ຈັບບັນດາຜູ້ນຳຂອງການປະຕິວັດ.

ເພື່ອປົກປັກຮັກສາ ແລະ ຂະຫຍາຍກຳລັງປະຕິວັດ, ພັກໄດ້ນຳພາຫັນທິດການຕໍ່ສູ້, ຈາກການຕໍ່ສູ້ທາງດ້ານການເມືອງ ມາສູ່ການຕໍ່ສູ້ດ້ວຍອາວຸດ ສົມທົບກັບການຕໍ່ສູ້ທາງດ້ານການເມືອງ. ດ້ວຍການຫັນທິດຕໍ່ສູ້ດັ່ງກ່າວ ພວກເຮົາໄດ້ສາມາດປຸກລະດົມປະຊາຊົນໃນທົ່ວປະເທດ ໄດ້ລຸກຮືຂຶ້ນສົມທົບກັບກຳລັງປະກອບອາວຸດ ຢຶດອຳນາດການປົກ

ຄອງເປັນພາກສ່ວນ. ນັບຕັ້ງແຕ່ຕົ້ນປີ ໑໙໖໐ ເປັນຕົ້ນມາ, ພວກເຮົາຫັງຕີ ຫັງຈຳກັດສັດຕູ ຕີສັດຕູໃຫ້ປະລາໄຊເທື່ອ ລະກ້າວ ບາດເອົາໄຊຊະນະເທື່ອລະກ້າວ, ຫັງສູ້ຣົບຫັງ ສ້າງກຳລັງປະຕິວັດໃຫ້ຟົດເດືອດຂຶ້ນ ແລະ ກາຍເປັນຂະ ບວນການທີ່ເຂັ້ມແຂງ, ສາງ ເງື່ອນ ໄຂ ໃຫ້ ບັນ ດາ ຜູ້ ນຳ ຫລຸດພົ້ນອອກຈາກຄຸກ, ພາໃຫ້ມີການລັດຖະປະຫານຣັກ ຊາດ. ພວກເຮົາໄດ້ສຳພັນກັບກຳລັງລັດຖະປະຫານ, ບາດ ເອົາການຊ່ວຍເຫລືອຢ່າງເປີດເຜີຍ ຈາກຫວຽດນາມ ສະ ຫະພາບໂຊວຽດ, ແລະ ປະເທດເພື່ອນມິດອື່ນໆ ເພື່ອມາ ເພີ່ມກຳລັງແຮງໃຫ້ການຕໍ່ສູ້ ທາງ ດ້ານ ການ ທະ ຫານ, ການເມືອງ ແລະ ການຕ່າງປະເທດ. ດ້ວຍໄຊຊະນະຂອງ ພວກເຮົາຢູ່ບັ້ນຣົບຫລວງນ້ຳທາ, ພວກເຮົາໄດ້ບັງຄັບໃຫ້ ຈັກກະພັດອາ ເມ ລິ ກາ ແລະ ລູກມືຍອມສ້າງຕັ້ງລັດຖະ ບານປະສົມ ໓ ຝ່າຍ ແລະ ເຊັນສັນຍາເຊີແນວປີ ໑໙໖໒ ກ່ຽວກັບລາວ, ເຮັດ ໃຫ້ ສະ ພາບ ການ ໃນ ປະເທດເຮົາສະ ຫງົບລົງຊົ່ວຄາວ. ກຳລັງປະຕິວັດ ໄດ້ຂະຫຍາຍຕົວເຕີບ ໃຫຍ່ຂຶ້ນກ້າວໜຶ່ງ ແລະ ມີເຂດປົດປ່ອຍ ໒/໓ ຂອງທົ່ວ ປະເທດ. ຫລັງຈາກທີ່ໄດ້ປະຕິບັດກົນອຸບາຍ "ໂບະບານ ເພື່ອປັບປຸງກຳລັງ" ຈັກກະພັດອາເມລິກາກໍ່ໄດ້ກັບຄືນມາ

ໃຊ້ສົງຄາມພິເສດ. ພວກເຂົາໄດ້ໂຄ່ນລົ້ມລັດຖະບານ ປ ຝ່າຍ ແລະ ເປີດບັ້ນຣົບຢ່າງລຽບຕິດ ດ້ວຍການຊ່ວຍໜູນຂອງບົນສູ້ຣົບ ເພື່ອທຳລາຍ ແລະ ບຽດບີດເຂດປົດປ່ອຍ ເລີ້ມແຕ່ປີ ໑໙໖໔ ເປັນຕົ້ນມາ. ໃນສະພາບສົງຄາມອັນດຸເດືອດດັ່ງກ່າວ ສູນກາງພັກໄດ້ເດັດດ່ຽວປຸກລະດົມທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນ ໃຫ້ປະສານສົມທົບກັບກອງທັບ ແລະ ປະຊາຊົນຫວຽດນາມ ດຳເນີນການຕໍ່ສູ້ກັບສັດຕູຢ່າງອົງອາດກ້າຫານ ແລະ ເອົາຊະນະສົງຄາມພິເສດ ເພີ່ມກະວີໂດຍປະຕິບັດຕາມຄຳຮຽກຮ້ອງຂອງພັກ, ນັກຮົບ ແລະ ປະຊາຊົນຂອງພວກເຮົາ ໄດ້ມອບກາຍຖະຫວາຍຊີວິດໃຫ້ແກ່ປະເທດຊາດ, ບຸກເຂົ້າຟາດຟັນສັດຕູຢ່າງພິລະອາດຫານ, ບໍ່ວ່າມັນຈະມາທາງດິນຫລືທາງອາກາດ, ປະຊາຊົນພວກເຮົາ ໄດ້ຝັງເລີກຄວາມຄຽດແຄ້ນສັດຕູ ແລະ ໄດ້ອອກແຮງຊ່ວຍເຫລືອກອງທັບໃນທຸກດ້ານໃນປີ ໑໙໖໗ ພວກເຮົາໄດ້ກ້າວຂຶ້ນ ບາດເອົາໄຊຊະນະອັນມີລັກສະນະຍຸດທະສາດທີ່ບ້າບາກ, ພາບແພ້ສົງຄາມທຳລາຍທາງອາກາດ ແລະ ພ້ອມກັນນັ້ນກໍບຸກເຂົ້າເຣືອນຮັງກອງປຸ້ນຂອງອາເມລິກາ ທີ່ຕັ້ງຢູ່ໃຈກາງຂອງເຂດປົດປ່ອຍ ພວກເຮົາໄດ້ກ້າວຂຶ້ນສູ່ທ່າເປັນເຈົ້າການ, ທ່າບຸກໂຈມຕີ

ໃນທຸກສະຫນາມຮົບ. ນັບຕັ້ງແຕ່ປີ ໑໙໕໙ ເປັນຕົ້ນມາ, ພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງພັກ, ກອງທັບ ແລະ ປະຊາຊົນລາວໄດ້ປະສານສົມທົບກັບກອງທັບ ແລະ ປະຊາຊົນຫວຽດນາມ, ກັບກອງທັບ ແລະ ປະຊາຊົນກຳປູເຈຍ, ສືບຕໍ່ບຸກລັດຕູຢ່າງລຽນຕິດ, ພວກເຮົາໄດ້ຜານແພ້ຈັກກະພັດອາເມລິກາ ແລະ ລູກມືໃນບັ້ນຮົບ "ກູ້ກຽດ" ບັ້ນຮົບລາມເຊີນ ໗໑໙ ແລະ ບັ້ນຮົບອື່ນໆ ກ້າວຂຶ້ນປົດປ່ອຍດິນແດນອັນກ້ວາງຂວາງທີ່ກວມ ໔/໕ ຂອງປະເທດ ແລະ ບົນພື້ນຖານຂອງໄຊຊະນະນັ້ນ, ພວກເຮົາໄດ້ບັງຄັບໃຫ້ຈັກກະພັດອາເມລິກາ ແລະ ລູກມືຕ້ອງຢຸດຕິສົງຄາມຮຸກຮານ, ຍອມເຊັນສັນຍາ ແລະ ອະນຸສັນຍາວຽງຈັນໃນປີ ໑໙໗໓, ຮັບຮູ້ສິດພື້ນຖານແຫ່ງຊາດ ຂອງປະຊາຊົນລາວ, ເຮັດໃຫ້ນະຄອນຫລວງວຽງຈັນ ແລະ ນະຄອນຫລວງພະບາງກາຍເປັນກາງ, ຈັດຕັ້ງລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ.

ໃນສະພາບການນັ້ນ ພັກໄດ້ຫັນການຕໍ່ສູ້ປະຕິວັດຈາກສົງຄາມປົດປ່ອຍຊາດ ມາເປັນການຕໍ່ສູ້ປະຕິວັດທາງການເມືອງ, ເສດຖະກິດວັດທະນະທຳ ສັງຄົມໃນເງື່ອນໄຂສັນຕິ

ພາບ ເຖິງວ່າຈະພົບຄວາມຫຍຸ້ງຍາກຫລາຍປະການ ທີ່ຈັກກະພັດອາເມລິກາ ແລະ ພວກປະຕິການຝ່າຍຂວາງຈັບກໍ່ຂຶ້ນກໍ່ຕາມ, ແຕ່ການຕໍ່ສູ້ປະຕິວັດ ກໍໄດ້ສືບຕໍ່ຂະຫຍາຍຕົວ ແລະ ຜ່ານການຕໍ່ສູ້ນັ້ນ, ສັນຕິພາບຢູ່ພາຍໃນປະເທດກໍໄດ້ຮັບການປັບປຸງເທື່ອລະກ້າວ. ສະພາບການດັ່ງກ່າວໄດ້ສ້າງເງື່ອນໄຂອັນສະດວກ ໃຫ້ ປະ ຊາ ຊົນ ໃນບັນດາຕົວເມືອງຕ່າງໆ ທີ່ຖືກອາເມລິກາ ແລະ ລູກມືຄອບງຳມາເປັນເວລາຫລາຍປີ ເພື່ອລຸກຂຶ້ນຕໍ່ສູ້.

ສະພາບການຢູ່ພາຍໃນປະເທດ ໄດ້ຄ່ອຍ ໆ ສຸກງອມ, ພ້ອມກັບນັ້ນໄຊຊະນະຂອງປະຊາຊົນຫວຽດນາມ ແລະ ປະຊາຊົນກຳປູເຈຍໃນເດືອນ ໔/໑໙໗໕ ກໍໄດ້ສ້າງກາລະໂອກາດອັນດີໃຫ້ແກ່ການປະຕິວັດລາວ, ກາລະໂອກາດທີ່ພັນປີຈຶ່ງມີເທື່ອໜຶ່ງໄດ້ມາເຖິງແລ້ວ ເພື່ອກ້າວຂຶ້ນຍາດເອົາໄຊຊະນະອັນສົມບູນສຳລັບປະຊາຊົນລາວ. ໂດຍ ກຳ ແໜ້ນກາ ລະ ໂອ ກາດ ນັ້ນ, ສູນກາງພັກໄດ້ຕົກລົງປຸກລະດົມມະຫາຊົນ ໃຫ້ລຸກຂຶ້ນຍຶດອຳນາດໃນທົ່ວປະເທດ. ຂະບວນການຕໍ່ສູ້ປະຕິວັດຂອງມະຫາຊົນໄດ້ແນໃສ່:

– ເຮັດໃຫ້ກອງທັບຂອງຝ່າຍຂວາແຕກທະລາຍ ລົບລ້າງລະບົບອຳນາດການປົກຄອງປະຕິການຂອງພວກຝ່າຍ

ຂວາ ຄວບຄຸມຊົ່ວຄາວ

– ສ້າງຕັ້ງ ແລະ ປົກປັກຮັກສາລະບົບອຳນາດການປົກຄອງປະຕິວັດ.

– ບຸດຕິການແຊກແຊງຂອງຈັກກະພັດອາເມລິກາ.

ວັນທີ ໓/໕/໑໙໗໕ ກອງທັບປົດປ່ອຍປະຊາຊົນລາວແຕ່ລະກົມກອງ ໄດ້ເຄື່ອນທັບເຂົ້າບັນດາຕົວເມືອງຕ່າງໆ ເພື່ອເປັນກຳລັງຫນູນ ໃຫ້ແກ່ຂະບວນການຕໍ່ສູ້ຂອງປະຊາຊົນ, ການຍຶດອຳນາດເປັນພາກສ່ວນໄດ້ເລີ່ມຕົ້ນ, ປະຊາຊົນແຂວງຕ່າງໆໄດ້ທະຍອຍກັນໂຄ່ນລົ້ມອຳນາດການປົກຄອງເກົ່າ ແລະ ສ້າງຕັ້ງອຳນາດການປົກຄອງປະຕິວັດ. ຮອດວັນທີ ໒໓/໘/໑໙໗໕ ປະຊາຊົນຊາວນະຄອນຫລວງວຽງຈັນໄດ້ໂຮມຊຸມນຸມໃຫຍ່ ປະກາດສ້າງຕັ້ງອຳນາດການປົກຄອງຂອງນະຄອນວຽງຈັນ ແລະ ແຂວງວຽງຈັນ, ການຍຶດອຳນາດຂອງປະຊາຊົນແຂວງຕ່າງໆ ໃນທົ່ວປະເທດໄດ້ສຳເລັດລົງໃນດ້ານພື້ນຖານ. ໃນວັນທີ ໑ ແລະ ວັນທີ ໒/໑໒/໑໙໗໕ ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ຮັບການຈັດຕັ້ງຂຶ້ນ. ກອງປະຊຸມໃຫຍ່ໄດ້ເປັນເອກະສັນກັນລົງມະຕິລົບລ້າງລະບອບລາຊາທິປະໄຕ ແລະ ສ້າງຕັ້ງລະບອບສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ການ

ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໄດ້ເປັນຂີດໝາຍແຫ່ງການສິ້ນສຸດໄລຍະ ການປະຕິວັດຊາດ-ປະຊາທິປະໄຕ ພ້ອມກັບນັ້ນ ກໍເປັນຂີດໝາຍແຫ່ງການເລີ່ມຕົ້ນໄລຍະໃໝ່ຂອງການປະຕິວັດ ຄືໄລຍະການປະຕິວັດສັງຄົມນິຍົມ.

ຕີລາຄາສະພາບການ, ຖະແຫລງການຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດໄດ້ກ່າວວ່າ:... ພາຍຫລັງທີ່ໄດ້ດຳເນີນການຕໍ່ຕ້ານອັນສັກກະລະບູຊາມາເປັນເວລາ ໓໐ ປີ ຊາວລາວເຮົາໄດ້ຜາບແພ້ຈັກກະພັດໃຫຍ່ສອງໂຕຄື: ຝະລັ່ງແລະອາເມລິກາເຊີ່ງສິ້ນສຸດລົງດ້ວຍການລຸກຮື້ຂຶ້ນຂອງປະຊາຊົນເຮົາໃນທົ່ວປະເທດ, ທັບມ້າງກຳລັງການທະຫານ ແລະອຳນາດການປົກຄອງຂອງກຸ່ມນາຍທຶນຈຳໜ່າຍອາດຍາສິດຂຸນເສິກ, ສັກດີນາປະຕິການ, ລູກມືຂອງຈັກກະພັດອາເມລິກາ ທີ່ເປັນຫົວໂປ່ຂອງຄ້າຍຈັກກະພັດນາຍທຶນ ລົບລ້າງທຸກຕ່ອງໂສ້ລ່າເມືອງຂຶ້ນ ຍາດເອົາອຳນາດການປົກຄອງ ມາສູ່ກຳມືປະຊາຊົນ, ເຮັດໃຫ້ປິຕຸພູມຂອງພວກເຮົາໄດ້ຮັບເອກະລາດ ແລະເອກະພາບຢ່າງສົມບູນ. ໄຊຊະນະອັນຮຸ່ງເຮືອງເຫລືອງເຫລື້ອມດັ່ງກ່າວໄດ້ເຮັດໃຫ້ພື້ນແຜ່ນດິນຂອງພວກເຮົາ ປາສະຈາກເງົາຂອງພວກ

ສັດຕູຜູ້ຮຸກຮານ ເຊິ່ງນັບວ່າເປັນຄັ້ງທຳອິດໃນໄລຍະເກືອບ ໖໐໐ ປີ ມານີ້, ເຮັດໃຫ້ແອກແຫ່ງການຄອບຄອງຂອງຈັກກະພັດແລະສັກດີນາ ທີ່ເດັ່ງຄໍ່ປະຊາຊົນເຮົານັ້ນສິ້ນສຸດລົງຢ່າງຕະຫລອດການ, ອັ່ນໄດ້ເຮັດໃຫ້ປະຊາຊົນບັ້ນດາຊົນຊາດລາວເຮົາຈາກຊາຕາກຳ ທີ່ເປັນຂ້ອຍຂ້າແສນທຸກຍາກກາກກຳ ມາສູ່ຍອດແຫ່ງກຽດສັກສີທີ່ໄດ້ກາຍມາເປັ່ນເຈົ້າຂອງປະເທດຊາດ, ເປັນເຈົ້າຂອງສັງຄົມອັນແທ້ຈິງ. ອັນນັ້ນແມ່ນໄຊຊະນະທີ່ສະຫງ່າງາມຮຸ່ງເຮືອງເຫລືອງເຫລື້ອມ ທີ່ບໍ່ເຄີຍມີມາຈັກເທື່ອໃນປະຫວັດສາດ ຂອງຊາດລາວເຮົາ, ເຮັດໃຫ້ຊາຕາກຳຂອງຊາດ ແລະສັງຄົມປະເທດເຮົາ ປ່ຽນແປງຢ່າງເລິກເຊິ່ງ, ອັນໄດ້ໄຂສັງກາດແຫ່ງການກໍ່ສ້າງປິຕຸພູມລາວທີ່ແສນຮັກແລະຫວງແຫນ ຂອງພວກເຮົາໃຫ້ກ້າວເດີນໄປຢ່າງວ່ອງໄວແລະເຂັ້ມແຂງໃນເສັ້ນທາງ ເອກະລາດເປັນເຈົ້າຕົນເອງ, ເອກະພາບແລະວັດທະນາຖາວອນ, ຮັບປະກັນໃຫ້ປະຊາຊົນບັນດາຊົນຊາດລາວເຮົາ ໄດ້ດຳລົງຊີວິດຢູ່ຢ່າງອີ່ມໜຳສຳລານ, ມີອິດສະ ລະ ພາບ ຂອງ ຕົນ, ຊາດລາວເຮົາໄດ້ພ້ອມກັບບັນດາປະຊາຊົນຫວຽດນາມແລະກຳປູເຈຍອ້າຍນ້ອງປະກອບສ່ວນຢ່າງສົມກຽດເຂົ້າ ໃນການຕໍ່ສູ້ເພື່ອສັນຕິພາບຄວາມຍຸຕິທຳ ແລະພາລະກິດປະຕິວັດ

ລວມຂອງປະຊາຊົນໃນໂລກ."

**III.** ນັບຕັ້ງແຕ່ວັນທີ ໒ ທັນວາ ໑໙໗໕ ເປັນຕົ້ນມາ, ພັກປະຊາຊົນ ປະຕິວັດລາວ ໄດ້ກາຍເປັນພັກກຳອຳນາດ, ຈຶ່ງຮັກພັກດີຕໍ່ອຸດົມຄະຕິ ແລະ ວັດຖຸປະສົງຂອງຕົນ.

ພັກໄດ້ນຳພາປະຊາຊົນລາວ ດຳເນີນການສ້າງສາປະເທດລາວ ໄປຕາມເສັ້ນທາງສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ສັງຄົມນິຍົມ. ໃນດ້ານອື່ນ ພັກກໍໄດ້ເອົາໃຈໃສ່ໃນການເພີ່ມທະວີກຳລັງ ປະຕິວັດ ເພື່ອ ປົກປັກຮັກສາປະເທດຊາດ.

ເພື່ອດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ ຢູ່ໃນປະເທດລາວ ນັບຕັ້ງແຕ່ປີ ໑໙໗໗ ເປັນຕົ້ນມາ ພັກປະຊາຊົນ ປະຕິວັດລາວ ໄດ້ມີບັນດາມະຕິຕ່າງໆ (ມະຕິ ໔, ໕, ໖, ແລະ ໗ ຂອງສູນກາງພັກ) ໄດ້ວາງແນວທາງ ແລະ ໜ້າທີ່ທົ່ວໄປຂອງສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ຄື: "ກຳແໜ້ນ ແລະ ເພີ່ມທະວີ ຜະເດັດການກຳມະຊີບ, ປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ ຂອງປະຊາຊົນ ຜູ້ອອກແຮງງານ, ດຳເນີນການປະຕິວັດ ສາມປະການ ໄປພ້ອມກັບ: ການປະຕິວັດ ທາງດ້ານການພົວພັນ ແຫ່ງການຜະລິດ, ການປະຕິວັດ ທາງດ້ານວິທະຍາສາດ-ເຕັກນິກ,

ການປະຕິວັດ ທາງດ້ານແນວຄິດ ແລະ ວັດທະນະທຳ, ໃນ ນັ້ນເອົາການປະຕິວັດ ວິທະຍາສາດ–ເຕັກນິກ ເປັນຂໍກະແຈຕົ້ນຕໍ ແລະ ເອົາການປະຕິວັດແນວຄິດ ແລະ ວັດທະນະທຳ ໄປກ່ອນກ້າວໜຶ່ງ...".

ກ່ຽວກັບແນວທາງ, ໜ້າທີ່ກໍ່ສ້າງ ແລະ ຂະຫຍາຍເສດຖະກິດໃນສະໄໝຂ້າມຜ່ານ ຂຶ້ນສູ່ສັງຄົມນິຍົມ, ພັກກໍໄດ້ວາງໄວ້ຢ່າງຈະແຈ້ງຄື: "ເອົາການຂະຫຍາຍກະສິກຳ ແລະປ່າໄມ້ເປັນພື້ນຖານເພື່ອຂະຫຍາຍອຸດສາຫະກຳ, ສົມທົບການຂະຫຍາຍກະສິກຳ ແລະປ່າໄມ້ກັບອຸດສາຫະກຳຢ່າງສົມສ່ວນ ໃນແຕ່ລະບາດກ້າວ, ເອົາການຂະຫຍາຍບາງຂະແໜງການ ອຸດສາຫະກຳໜັກ ອັນຈຳເປັນທີ່ມີຜົນປະໂຫຍດເປັນສຳຄັນ ຮັບປະກັນການຊຸກຍູ້ຂະຫຍາຍກະ ສິກຳ, ປ່າໄມ້ແລະອຸດສາຫະກຳເບົາ. ສຸມທຸກຄວາມສາມາດເຂົ້າໃນການກໍ່ສ້າງ ແລະ ຂະຫຍາຍ ເສດຖະກິດທ້ອງຖິ່ນຕາມແຜນການເອກະພາບຂອງລັດ, ສ້າງເງື່ອນໄຂ ເພື່ອກ້າວຂຶ້ນກໍ່ສ້າງ ໂຄງປະກອບອັນສົມບູນ ຂອງເສດຖະກິດແຫ່ງຊາດ ໃນຂັ້ນຕໍ່ໄປ, ສົມທົບຢ່າງແໜ້ນແຟ້ນ ການກໍ່ສ້າງເສດຖະກິດກັບການເພີ່ມທະວີ ແລະ ປັບປຸງປ້ອງກັນຊາດ. ປ້ອງກັນຄວາມສະຫງົບ ລະດົມທຸກຄວາມສາມາດຢູ່

ພາຍໃນປະເທດ ເປັນຕົ້ນຕໍ, ພ້ອມກັນນັ້ນກໍຕ້ອງໜ້າຍາດແບ່ງ ແລະ ນຳໃຊ້ການຊ່ວຍເຫລືອ ແລະ ການຮ່ວມມືທາງດ້ານເສດຖະກິດ–ເຕັກນິກຂອງຕ່າງປະເທດ ໃຫ້ດີ ເພື່ອກໍ່ສ້າງເສດຖະກິດສັງຄົມນິຍົມ ທີ່ເປັນເອກະລາດ ເປັນເຈົ້າຕົນເອງຂອງພວກເຮົາ, ທັງນີ້ເພື່ອແນໃສ່ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳຂອງປະຊາຊົນ ບັນດາຊົນຊາດ ໃຫ້ສູງຂຶ້ນເທື່ອລະກ້າວ ແລະ ເພີ່ມການສະສົມທຶນຮອນ ທີ່ຈຳເປັນ ເພື່ອບູ້ຈັ່ງຫວະຫັນເປັນອຸດສາຫະກຳສັງຄົມນິຍົມຢ່າງວ່ອງໄວ.

ເພື່ອສຳເລັດແນວທາງ ແລະໜ້າທີ່ທົ່ວໄປ ກໍຄືແນວທາງແລະໜ້າທີ່ກໍ່ສ້າງແລະຂະຫຍາຍເສດຖະກິດດັ່ງກ່າວນັ້ນ, ພັກໄດ້ຖືເປັນສຳຄັນການເສີມຂະຫຍາຍກຳລັງແຮງສັງລວມຂອງລະບອບໃໝ່, ເຊິ່ງໃນນັ້ນ ບັນຫາພື້ນຖານແມ່ນຕ້ອງເພີ່ມທະວີຄວາມສາມັກຄີຊົນຊາດ, ຊົນເຜົ່າ, ບັນດາຊັ້ນຄົນໃນໝູ່ມະຫາຊົນ, ຕ້ອງກໍ່ສ້າງກ້ອນສາມັກຄີປວງຊົນໃຫ້ໜັ້ນແກ່ນຍິ່ງໆຂຶ້ນ ບົນຮາກຖານໃໝ່ດ້ວຍຄຸນນະພາບທີ່ສູງກ່ວາ ເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍກຳລັງປະຕິວັດໃນທຸກດ້ານ ແລະ ປະຕິບັດທຸກແນວທາງ, ນະໂຍບາຍຂອງພັກແລະລັດໃນລະບະໃໝ່ຢ່າງມີໄຊ. ພັກ

ບໍ່ພຽງແຕ່ ເພີ່ມທະວີຄວາມສາມັກຄີ ປວງຊົນທັງຊາດເທົ່າ ນັ້ນ, ຫາກຍັງເພີ່ມທະວີ ຄວາມສາມັກຄີສາກົນອີກດ້ວຍ. ພັກຍາມໃດ ກໍບໍ່ລົດລະໃນການເພີ່ມທະວີແບບພິເສດ ກັບ ພັກກອມມູນິດຫວຽດນາມປະຊາຊົນຫວຽດນາມ, ແລະ ປະ ຊາຊົນກຳປູເຈຍ, ໃນການເພີ່ມທະວີຄວາມສາມັກຄີແບບ ສູ້ຮົບກັບພັກກອມມູນິດແຫ່ງສະຫະພາບໂຊວຽດ ແລະ ປະ ຊາຊົນໂຊວຽດ, ກັບບັນດາພັກກອມມູນິດ ແລະ ປະຊາຊົນ ຂອງບັນດາປະເທດສັງຄົມນິຍົມ ແລະ ກັບບັນດາພັກກອມ ມູນິດອື່ນໆ ທີ່ເດີນຕາມລັດທິມາກ-ເລນິນ ແລະ ລັດທິສາ ກົນກຳມະຊີບຢ່າງແທ້ຈິງ.

ໃນດ້ານອື່ນ, ເພື່ອເຮັດໃຫ້ພາລະກິດດັດສ້າງ ແລະ ກໍ່ ສ້າງສັງຄົມນິຍົມສຳເລັດ, ກໍມີຄວາມ ຈຳ ເປັນ ທີ່ ຈະ ຕ້ອງ ເພີ່ມທະວີການນຳພາຂອງພັກ ຢ່າງ ບໍ່ ຢຸດ ຢັ້ງ. ໃນໄລຍະ ໃໝ່ຂອງການປະຕິວັດນີ້, ພັກປະຊາຊົນປະຕິວັດລາວໄດ້ຖື ເອົາການກໍ່ສ້າງກຳລັງປະຕິວັດ ໃຫ້ເຂັ້ມແຂງ ໃນທຸກດ້ານ ເປັນສິ່ງສຳຄັນ. ມະຕິ ໔ ຂອງສູນກາງພັກໄດ້ບົ່ງໜ້າທີ່ກໍ່ ສ້າງພັກ: "ເພີ່ມທະວີວຽກງານການກໍ່ສ້າງພັກ, ເຮັດໃຫ້ ພັກກຳແໜ້ນ ແລະ ໝູນໃຊ້ລັດທິມາກ-ເລນິນເຂົ້າໃນສະ

ພາບແວດລ້ອມຂອງປະເທດເຮົາ ຢ່າງມີຫົວຄິດປະດິດສ້າງ ເພື່ອວາງແນວທາງ, ນະໂຍບາຍຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຢ່າງມີໄຊ, ເຮັດໃຫ້ພັກເຮົາມີຄວາມເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງແນໃສ່ເພີ່ມທະວີ ແລະ ເສີມຂະຫຍາຍລັກສະນະຊົນຊັ້ນ, ລັກສະນະນຳໜ້າ ແລະ ຄວາມສາມາດໃນການນຳພາຮອບດ້ານຂອງພັກ, ເຮັດໃຫ້ພັກກາຍເປັນແກ່ນສານນຳພາລະບົບພະເດັດການກຳມະຊີບຢ່າງແທ້ຈິງແລະມີຄວາມສາມາດຢ່າງພຽງພໍ ໃນການນຳພາການປະຕິວັດໃນໄລຍະໃໝ່ໃຫ້ສຳເລັດຜົນ".

ເພື່ອບັນລຸຈຸດໝາຍຂອງໜ້າທີ່ກໍ່ສ້າງພັກດັ່ງກ່າວນັ້ນ. ພັກໄດ້ຮຽກຮ້ອງໃຫ້ສະມາຊິກພັກທຸກຄົນອອກແຮງເຝິກຝົນຕົນເອງ ເພື່ອຍົກລະດັບຄຸນນະພາບໃຫ້ສູງຂຶ້ນໃນທຸກດ້ານ ຄວາມຮຽກຮ້ອງຂອງພັກທີ່ມີຕໍ່ສະມາຊິກພັກໃນໄລຍະປະຈຸບັນແມ່ນ ສະມາຊິກພັກທຸກຄົນ ຕ້ອງມີຄຸນສົມບັດປະຕິວັດສູງ ແລະ ມີຄວາມສາມາດສູງ ມະຕິ ກ ຂອງສູນກາງພັກໄດ້ບົ່ງໄວ້ວ່າ: "ໃນປະຈຸບັນນີ້ພະນັກງານ ແລະ ສະມາຊິກພັກ ຕ້ອງສືບຕໍ່ຍົກສູງຈິດໃຈປະຕິວັດ ແລະ ຈິດໃຈນຳໜ້າໃນທຸກວຽກງານ. ຫລັກໝັ້ນມິດສັດຕູຢ່າງຈະແຈ້ງ, ເຫັນ

ແກ່ຜົນປະໂຫຍດສ່ວນລວມ ບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວ, ແພງຖະໜອມຂອງສ່ວນລວມ, ບໍ່ໃຫ້ຖືກຊື້ຈ້າງ, ຕ້ອງໜັກແໜ້ນ ໃນທຸກສະພາບການ, ຮູ້ເຄົາລົບສິດເປັນເຈົ້າໝູ່ຂອງປະຊາຊົນ, ເອົາໃຈໃສ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດ, ຕ້ອງເປັນຜູ້ມີຄວາມສາມາດຈັດຕັ້ງປະຕິບັດບັນດາຄຳສັ່ງ, ມະຕິຂອງພັກຂອງລັດ ແລະ ອົດທົນຮ່ຳຮຽນ, ບົກລະດັບການເມືອງ, ວັດທະນະທຳ ວິຊາສະເພາະ ຂຶ້ນຢ່າງບໍ່ຢຸດຢັ້ງ ເພື່ອ ເຮັດຫລ້ອນ ໜ້າ ທີ່ຂອງຕົນ.

ໃນດ້ານອື່ນ ເພື່ອເຮັດໃຫ້ຖັນແຖວສະ ມາຊິກ ພັກ ຂະຫຍາຍຕົວເຕີບໃຫຍ່ຢ່າງບໍ່ຢຸດຢັ້ງນັ້ນ ສະມາຊິກທຸກຄົນຕ້ອງພົວພັນ ໃກ້ຊິດຕິດແທດມະຫາຊົນ ເອົາໃຈໃສ່ຊອກຜູ້ທີ່ມີຄວາມຕື່ນຕົວຢ່າງແທ້ຈິງ, ທີ່ຕໍ່ສູ້ພິລະອາດຫານ, ທີ່ຈູບຈ້າວຫ້າວຫັນໃນການອອກແຮງງານ ໃນຂະບວນການມະຫາຊົນ, ອົບຮົມ, ບຳລຸງເຂົາ ແລະ ເອົາເຂົາເຂົ້າພັກຄົນດັ່ງກ່າວນີ້ເປັນຜູ້ດີເດັ່ນໃນຊົນຊັ້ນກຳມະກອນ ໃນໝູ່ຊາວໄຮ່ນາ ຜູ້ອອກແຮງງານບັນດາຊົນຊາດ, ໃນບັນດາກຳລັງປະກອບອາວຸດ. ໃນໝູ່ນັກຮຽນ ຜູ້ທີ່ໄດ້ຮັບການເຝິກຝົນຫລໍ່ຫລອມແລະ ໄດ້ຮັບການທົດສອບໃນການຕໍ່ສູ້ປະຕິວັດ.

ພັກປະຊາຊົນປະຕິວັດລາວ ໄດ້ເປັນພັກທີ່ກຳເນີດເກີດຂຶ້ນໃນປະເທດນ້ອຍ, ປະເທດກະສິກຳຫລ້າຫລັງ ແຕ່ຜ່ານພຶດຕິກຳກໍໄດ້ເປັນທີ່ປະຈັກແຈ້ງວ່າພັກສາມາດນຳພາມະຫາຊົນຕີເອົາຊະນະຈັກກະພັດ, ສຳເລັດໜ້າທີ່ປະຫວັດສາດ, ສາຍເຫດທີ່ພາໃຫ້ເຮັດໄດ້ແນວນັ້ນ ກໍຍ້ອນວ່າພັກໄດ້ກຳແໜ້ນລັດທິມາກ-ເລນິນ ຮູ້ໝູນໃຊ້ເຂົ້າໃນສະພາບການຕົວຈິງຂອງປະເທດ, ມີຍຸດທະສາດ, ຍຸດໂທບາຍ ແລະ ວິທີການປະຕິວັດອັນຖືກຕ້ອງ, ສາມາດເຕົ້າໂຮມ ແລະ ສາມັກຄີບັນດາກຳລັງແຫ່ງຊາດ ມີແນວທາງການຕ່າງປະເທດຖືກຕ້ອງ.

ຜ່ານບັນດາ ໄຊຊະນະຍາດມາໄດ້ນັ້ນ ໄດ້ຢັ້ງຢືນວ່າປະຊາຊົນລາວ ເຖິງວ່າຈະມີຈຳນວນພຽງແຕ່ ໓ ລ້ານປາຍ, ແຕ່ພັກໄດ້ສາມາດ ປຸກລະດົມກໍ່ສ້າງກຳລັງແຮງສັງລວມຢ່າງພຽງພໍ ເພື່ອເຮັດສຳເລັດໜ້າທີ່ ທີ່ໄດ້ວາງອອກ.

ຜ່ານພຶດຕິກຳ, ເຖິງວ່າພັກໄດ້ກຳເນີດຂຶ້ນໃນປະເທດກະສິກຳຫລ້າຫລັງ, ຊົນຊັ້ນກຳມະກອນຫາກໍຈໍ່ຂຶ້ນ. ປະຊາຊົນສ່ວນຫລາຍເປັນຊາວໄຮ່ນາ, ແຕ່ພັກກໍໄດ້ກໍ່ສ້າງຕົນເອງໃຫ້ເປັນພັກຊົນຊັ້ນກຳມະກອນຢ່າງແທ້ຈິງ ພັກໄດ້ຮູ້ຈັກເອົາລັດທິມາກ-ເລນິນ, ມາເປັນເຂັມທິດ, ຮູ້ສົມທົບລັດ

ທີ່ຮັກຊາດອັນດູດດື່ມກັບລັດທິສາກົນກຳມະຊີບອັນແທ້ຈິງ.

ພັກປະຊາຊົນປະຕິວັດລາວ ເຖິງວ່າເປັນພັກທີ່ເກີດຂຶ້ນໃໝ່ ແຕ່ກໍຮູ້ຈັກສຶກສາອົບຮົມຕົນເອງ ດ້ວຍລັດທິມາກ - ເລນິນ, ປະຕິບັດ ຫລັກການຈັດຕັ້ງອັນແໜ້ນໜາ, ແລະ ສາມາດສ້າງຄວາມສາມັກຄີພາຍໃນຂຶ້ນໄດ້.

ພັກປະຊາຊົນປະຕິວັດລາວ ເປັນພັກຢູ່ໃນປະເທດນ້ອຍ ແຕ່ກໍສາມາດສ້າງຜົນງານ ປະກອບສ່ວນເຂົ້າໃນການປົບປຸງ ແລະ ເພີ່ມທະວີກຳລັງແຮງຂອງຂະບວນການກອມມູນິດສາກົນ, ທັງນີ້ກໍຍ້ອນວ່າ ພັກມີທັດສະນະສາກົນອັນຖືກຕ້ອງ, ມີຄວາມອົດທົນ ກຽວແໜ້ນຮູ້ຈັກເອົາການປະຕິວັດລາວ ເຂົ້າເປັນພາກສ່ວນໜຶ່ງ ທີ່ສະໜິດແໜ້ນຂອງການປະຕິວັດໂລກ.

ໃນສູ່ມື້ນີ້, ພາຍໃຕ້ການນຳພາອັນເດັດດ່ຽວຂອງພັກ, ປະຊາຊົນລາວຜູ້ອອກແຮງງານ ໄດ້ຮັບການເສີມຂະຫຍາຍສິດເປັນເຈົ້າຂະບວນການມະຫາຊົນ ສ້າງຕັ້ງສະຫະກອນກະເສດອອກແຮງງານຜະລິດຜົນ, ຂະບວນການມະຫາຊົນແກ້ໄຂຄວາມບໍ່ຮູ້ໜັງສື, ດຳລົງຊີວິດແບບໃໝ່, ຂະບວນການມະຫາ ຊົນ ເຂົ້າ ຮ່ວມ ການ ປ້ອງ ກັນ ຊາດ, ປ້ອງກັນຄວາມສະຫງົບໄດ້ຟົດເດືອດ ແລະ ນັບມື້ນັບກວ້າງຂວາງ

ແຂງແຮງ, ພັນທະພາບກຳມະກອນຊາວນາ ເຊິ່ງເປັນພື້ນຖານໃຫ້ແກ່ແນວໂຮມແຫ່ງຊາດໄດ້ຮັບການເພີ່ມທະວີ, ບັນດາອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງປະຕິວັດ ໄດ້ຮັບການປັບປຸງຢ່າງບໍ່ຢຸດຢັ້ງ, ບັນດາກຳລັງປະຕິວັດນັບມື້ນັບໄດ້ຮັບການເພີ່ມທະວີຂຶ້ນ ແລະ ນັບມື້ນັບເຂັ້ມແຂງ, ໄດ້ທັບມ້າງບັນດາກົນອຸບາຍໂຄ່ນລົ້ມ ຂອງສັດຕູເປັນລຳດັບມາ, ອິດທິພົນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັບມື້ນັບເດັ່ນຂຶ້ນໃນເວທີສາກົນ. ອະນາຄົດ ຂອງ ປະ ເທດ ລາວ ແມ່ນສະຫວ່າງສະໄຫວທີ່ສຸດ.

**IV. –** ລາຍຊື່ຂອງບັນດາກຳມະການຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ.

ເລຂາທິການໃຫຍ່ຂອງພັກ: ໄກສອນ ພົມວິຫານ.

ກົມການເມືອງສູນກາງພັກ:

໑)– ໄກສອນ ພົມວິຫານ.

໒)– ໜູຮັກພູມສະຫວັນ.

໓)– ສຸພານຸວົງ.

໔)– ພູມີ ວົງວິຈິດ.

໕)– ຄຳໄດ ສີພັນດອນ.

໖)– ພູນ ສີປະເສີດ.

໗)– ສີສົມພອນ ລ໋ວັນໄຊ.

ຄະນະເລຂາທິການສູນກາງພັກ :

໑)– ໄກສອນ ພົມວິຫານ.

໒)– ໜູຮັກ ພູມສະຫວັນ.

໓)– ພູນ ສີປະເສີດ.

໔)– ສີສົມພອນ ລ໋ວັນໄຊ.

໕)– ສາລີ ວົງຄຳຊາວ.

໖)– ສີສະຫວາດ ແກ້ວບຸນພັນ.

ບັນດາກຳມະການສູນກາງພັກ :

໑)– ທິດມວນ ສາວຈັນທະລາ.

໒)– ຄຳສຸກ ໄຊຍະແສງ.

໓)– ຊົມຊື່ນ (ຕາຍ).

໔)– ສະໝັ່ນ ສຸດທິຈັກ.

໕)– ນາ ໄຂຄຳພິທູນ.

໖)– ໝື່ນ ສົມວິຈິດ.

໗)- ຈັນມີ ດວງບຸດດີ.

໘)- ໄມສຸກ ໄຊສົມແພງ.

໙)- ສະໜານ ວິບາເກດ.

໑໐)- ໄມຈັນຕານ ແສງມະນີ.

໑໑)- ໃບລາງ.

໑໒)- ສູນທອນ.

໑໓)- ສຸກ ວົງສັກ.

໑໔)- ຄຳມົວ (ຕາຍ).

ບັນດາກຳມະການສຳຮອງສູນກາງພັກ:

໑)- ສີຊະນະ ສີສານ.

໒)- ສີພອນ ພາລີຂັນ.

໓)- ນາງ ຄຳແພງ ບຸບຜາ.

໔)- ເພນວື ລໍບະເລຍປາວ.

໕)- ສົມສັກ ໄຊສົງຄາມ.

໖)- ຄຳບຸ ສຸນີໄຊ.